

## ເປັນຫຍັງຂ້ອຍຈຶ່ງໄດ້ຮັບ Family Assessment Response(ການໂຕ້ຕອບການປະເມີນຄອບຄົວ)?

- ພະແນກເດັກນ້ອຍ, ຊາວໜຸ່ມ ແລະ ຄອບຄົວ (Department of Children, Youth, and Families) (DCYF) ໄດ້ຮັບບົດລາຍງານທີ່ມີຄວາມເປັນຫ່ວງກ່ຽວກັບຄວາມປອດໄພຂອງລູກທ່ານ.
- ບົດລາຍງານຖືກກັບຄຳນິຍາມທາງດ້ານກົດໝາຍຂອງການຂູດຮີດ ແລະ ການລະເລີຍເດັກໃນລັດວໍຊິງຕັນ (RCW 26.44.020).
- ບົດລາຍງານບໍ່ໄດ້ເວົ້າວ່າລູກຂອງທ່ານຕົກຢູ່ໃນອັນຕະລາຍໃນຂະນະນີ້.
- DCYF ຕ້ອງການເຮັດວຽກກັບທ່ານເພື່ອຊ່ວຍໃຫ້ລູກຂອງທ່ານປອດໄພ.



## ຂ້ອຍຕິດຕໍ່ຫາໃຜໄດ້ ຖ້າຂ້ອຍມີຄວາມເປັນຫ່ວງກ່ຽວກັບເລື່ອງຂອງຂ້ອຍ?

ຖ້າທ່ານມີຄຳຮ້ອງທຸກ ຫຼື ຄວາມເປັນຫ່ວງກ່ຽວກັບເລື່ອງຂອງທ່ານກຳລັງຖືກຈັດການແນວໃດ, ໃຫ້ໂທຫາຫົວໜ້າສາຍງານຜູ້ຮັບຜິດຊອບເລື່ອງ FAR ຂອງທ່ານ.

ຖ້າຄວາມເປັນຫ່ວງຂອງທ່ານຍັງບໍ່ໄດ້ຮັບການແກ້ໄຂ ທ່ານສາມາດໂທຫາຜູ້ບໍລິຫານງານເຂດໄດ້.

ທ່ານອາດຈະໂທຫາ Office of Constituent Relations (ຫ້ອງການປະຊາສຳພັນເພີ່ມເຕີມ) ໄດ້ທີ່ເບີ 1-800-723-4831 ເພື່ອຂໍຄວາມຊ່ວຍເຫຼືອໄດ້ທຸກເວລາ.

-ຫຼື-

ຫຼື ທ່ານອາດຈະໂທຫາ Office of the Family & Children's Ombuds* (ຫ້ອງການເຈົ້າໜ້າທີ່ຮັບຜິດຊອບກວດກາຄອບຄົວ ແລະ ເດັກ) ໄດ້ທີ່ເບີ 1-800-571-7321.

**ໜ່ວຍງານນີ້ແຍກຈາກ DCYF. ໜ່ວຍງານນີ້ສືບສວນຄວາມເປັນຫ່ວງກ່ຽວກັບ DCYF.*

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ໃນຮູບແບບ ຫຼື ພາສາອື່ນ, ກະລຸນາຕິດຕໍ່ພົວພັນກັບອົງການ DCYF (DCYF Constituent Relations) (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).*

DCYF PUBLICATION CWP_0023 | DSHS 22-1534 LA (07-2021) Laotian

# Family Assessment Response (ການໂຕ້ຕອບການປະເມີນຄອບຄົວ) (FAR)

*ເສັ້ນທາງຂອງ CPS ເພື່ອສ້າງຄວາມເຂັ້ມແຂງ ແລະ ສະໜັບສະໜູນຄອບຄົວຕ່າງໆ*



Washington State Department of
CHILDREN, YOUTH & FAMILIES



## Family Assessment Response (ການໂຕ້ຕອບການປະເມີນຄອບຄົວ) (FAR) ແມ່ນຫຍັງ?

FAR ແມ່ນວິທີການແຕກຕ່າງອັນໜຶ່ງ ສໍາລັບລັບການບໍລິການປົກປ້ອງຂອງລັດວໍຊິງຕັນ(Washington State Child Protective Services) ເພື່ອໂຕ້ຕອບບາງບົດລາຍງານກ່ຽວກັບການລ່ວງລະເມີດ ແລະ ການລະເລີຍເດັກ. ກ່ອນ FAR, CPS ໄດ້ໂຕ້ຕອບບົດລາຍງານຂອງການລ່ວງລະເມີດ ແລະ ການລະເລີຍເດັກດ້ວຍການສອບສວນແລ້ວ.

### FAR ເຮັດວຽກກັບຄອບຄົວເພື່ອ:

- ໃຫ້ການສະໜັບສະໜູນພວກເຂົາເມື່ອພວກເຂົາຢູ່ໃນສະພາບວິກິດໂດຍທີ່ບໍ່ມີການຊອກເຫັນພໍ່ແມ່ທີ່ຮັບຜິດຊອບຕໍ່ການລ່ວງລະເມີດ ຫຼື ການລະເລີຍເດັກ.
- ຊ່ວຍພວກເຂົາເຊື່ອມຕໍ່ກັບຊຸມຊົນຂອງພວກເຂົາ.

### ທັງຜູ້ສືບສວນ ແລະ ຜູ້ຮັບຜິດຊອບເລື່ອງ FAR:

- ເຮັດວຽກກັບຄອບຄົວ ເພື່ອໃຫ້ເດັກນ້ອຍປອດໄພ.
- ລະບຸຄວາມຕ້ອງການຂອງຄອບຄົວ.
- ສ້າງຄວາມເຂັ້ມແຂງ ແລະ ຊັບພະຍາກອນຂອງພໍ່ແມ່ ແລະ ຊຸມຊົນ.
- ຊອກຫາການບໍລິການທີ່ເຮັດໃຫ້ສະພາບການເຄັ່ງຕຶງທີ່ເຮັດໃຫ້ເນັ້ນໃສ່ຄວາມຕ້ອງການຂອງເດັກຍາກນັ້ນຜ່ອນຄາຍລົງ.

### ການສືບສວນ:

- ຕັດສິນວ່າມີການຂູດຮີດ ຫຼື ລະເລີຍເດັກເກີດຂຶ້ນຫຼືບໍ່.
- ລະບຸວ່າໃຜເປັນຜູ້ຮັບຜິດຊອບຕໍ່ການລ່ວງລະເມີດ ຫຼື ການລະເລີຍທີ່ຖືກກ່າວຫາ. ການຊອກຫາວ່າການລ່ວງລະເມີດເດັກ ຫຼື ການລະເລີຍເກີດຂຶ້ນ ຫຼືບໍ່. ອັນນີ້ຖືກເກັບໄວ້ໃນບັນທຶກຂອງ DCYF ແລະ ອາດຈະມີຜົນກະທົບຕໍ່ການຈ້າງງານໃນອະນາຄົດກັບເດັກນ້ອຍ ຫຼື ຜູ້ໃຫຍ່ທີ່ມີຄວາມອ່ອນແອ.

## Family Assessment Response (ການໂຕ້ຕອບການປະເມີນຄອບຄົວ) ເຮັດວຽກແນວໃດ?



ເມື່ອ DCYF ໄດ້ຮັບບົດລາຍງານກ່ຽວກັບຄອບຄົວຂອງທ່ານ, ຜູ້ຮັບຜິດຊອບເລື່ອງ FAR ຈະພົບກັບທ່ານ ເພື່ອລົມກ່ຽວກັບຄວາມປອດໄພຂອງລູກທ່ານ.

ຜູ້ຮັບຜິດຊອບເລື່ອງຈະເຮັດວຽກກັບທ່ານ ເພື່ອຕັດສິນວ່າທ່ານຈໍາເປັນຕ້ອງໄດ້ຮັບການບໍລິການ ຫຼື ການສະໜັບສະໜູນ ເພື່ອຫຼຸດຄວາມສ່ຽງຂອງການຂູດຮີດ ແລະ ການລະເລີຍເດັກໃນອະນາຄົດຫຼືບໍ່. ຜູ້ຮັບຜິດຊອບເລື່ອງຂອງທ່ານຈະຊ່ວຍຄອບຄົວຂອງທ່ານຜ່ານຜ່າສິ່ງທ້າທາຍຕ່າງໆໄປ.

ເລື່ອງ FAR ສ່ວນໃຫຍ່ຈະປິດພາຍໃນ 45 ວັນ. ເຖິງແນວໃດກໍ່ຕາມ, ທ່ານ ແລະ ຜູ້ຮັບຜິດຊອບເລື່ອງ FAR ອາດຈະເລືອກທີ່ຈະໃຫ້ເລື່ອງຂອງທ່ານເປີດເປັນເວລາ 120 ວັນ, ຖ້າມັນຈະມີປະໂຫຍດ ເພື່ອສືບຕໍ່ໃຫ້ການບໍລິການທີ່ສະໜັບສະໜູນວຽກທີ່ດໍາເນີນໄປໄດ້ດີທີ່ທ່ານໄດ້ເລີ່ມຕົ້ນເຮັດນັ້ນ.

### ທ່ານມີຕົວເລືອກ:

- ທ່ານສາມາດເລືອກທີ່ຈະເຂົ້າຮ່ວມໃນ FAR
  -ຫຼື-
- ທ່ານອາດຈະເລືອກໃຫ້ເຮັດການສືບສວນ CPS ແບບດັ້ງເດີມ

ຖ້າທ່ານບໍ່ເຫັນດີນໍາຜູ້ຮັບຜິດຊອບ FAR ຂອງທ່ານກ່ຽວກັບການບໍລິການທີ່ຄອບຄົວຂອງທ່ານຕ້ອງການ, ທ່ານອາດຈະຂໍປະຊຸມກັບເຈົ້າໜ້າທີ່ FAR ເພື່ອປຶກສາກ່ຽວກັບທາງເລືອກອື່ນ.

*ຜູ້ຮັບຜິດຊອບເລື່ອງຂອງທ່ານຈະຊ່ວຍຄອບຄົວຂອງທ່ານຜ່ານຜ່າສິ່ງທ້າທາຍຕ່າງໆໄປ.*

## Family Assessment Response (ການໂຕ້ຕອບການປະເມີນຄອບຄົວ) ສາມາດຊ່ວຍຂ້ອຍແນວໃດ?

ທ່ານຮູ້ສິ່ງທີ່ທ່ານ ແລະ ຄອບຄົວຂອງທ່ານຕ້ອງການ. ຜູ້ຮັບຜິດຊອບເລື່ອງ FAR ຂອງທ່ານຈະເຮັດວຽກກັບທ່ານເພື່ອ:

- ລະບຸວ່າທ່ານສາມາດເພີ່ມຄວາມປອດໄພຂອງລູກທ່ານຢູ່ບ້ານໄດ້ແນວໃດ.
- ໃຫ້ໄດ້ຕາມຄວາມຕ້ອງການພື້ນຖານຂອງຄອບຄົວ.
- ເພີ່ມທັກສະຕ່າງໆ ເພື່ອຊ່ວຍທ່ານເປັນພໍ່ແມ່ຂອງລູກທ່ານໃນທຸກອາຍຸ ແລະ ຂັ້ນຕອນ.
- ສ້າງການເຊື່ອມຕໍ່ທີ່ແຂງແຮງກັບຊຸມຊົນຂອງທ່ານ.
- ຊອກເບິ່ງຊັບພະຍາກອນຊຸມຊົນ ແລະ ໃຫ້ການສະໜັບສະໜູນເພື່ອແກ້ໄຂຂໍ້ຂ້ອງໃຈທີ່ກໍາລັງມີເຊັ່ນ: ບັນຫາທີ່ຢູ່ອາໄສ, ວຽກ ຫຼື ອື່ນໆທີ່ສ້າງຄວາມຄຽດໃຫ້ກັບທ່ານ ແລະ ຄອບຄົວຂອງທ່ານ.

*ພວກເຮົາເຮັດວຽກຮ່ວມກັນເພື່ອສ້າງຄວາມໝັ້ນໃຈ ແລະ ທັກສະຂອງທ່ານເພື່ອເຮັດໃຫ້ລູກຂອງທ່ານປອດໄພ.*